

# ຮອຍຊີວິດ

- ດຳລົງຊີວິດຢູ່ຖ້ຳໝາຫຼົງ
- ຜູ້ຢູ່ໃນເຫດການ (ບັ້ນລົບປົດປ່ອຍນ້ຳບາກ)
- ຈັກພິມດີດຮ້ອນ
- ຕັດຜົມໃຫ້ລຸງ

ເທດລະສອນ ດວງສົມຫິ

ໂດຍ : ເທດລະຄອນ ດວງສິນທິ

# ຮອຍຂີດ

ພິມຄັ້ງທີໜຶ່ງ

*2009*

*ສະຖານກົງສຸນໃຫຍ່ ແຫ່ງ ສປປ ລາວ ປະຈຳນະຄອນໂຮ່ຈິມິນ*

*ແຫ່ງ ສສ ຫວຽດນາມ*



ເທດລະຄອນ ດວງສິນທິ

# ຄຳນຳ

ເປັນຫຍັງຂ້ອຍຈຶ່ງຂຽນເລື່ອງຕົນເອງ? ຄຳຖາມນີ້ຂ້ອຍກໍ່ຕອບບໍ່ຖືກຄືກັນ, ແຕ່ທຸກຄັ້ງທີ່ຂ້ອຍຂຽນຊີວະປະຫວັດຂອງຕົນເອງ ຈະເປັນຊີວະປະຫວັດຫຍໍ້ກໍຕາມ, ໃນເມື່ອເຫັນຄຳຖາມໃນຮ່າງຊີວະປະຫວັດຂຽນວ່າ: ອາຍຸ 8 ປີຂຶ້ນມາສະຫາຍໄດ້ເຮັດຫຍັງແດ່, ຢູ່ໃສ ແລະ ໃຜຮູ້ນຳ, ຕອບຄຳຖາມນີ້ເກີນວ່າມັນງ່າຍ, ຂ້ອຍຈະຂຽນວ່າ: ອາຍຸ 8-10 ປີ ຮຽນຫນັງສືຢູ່ບ້ານ, 11-12 ປີ ເນື່ອງຈາກວ່າຢູ່ບ້ານບໍ່ມີຫ້ອງຮຽນ ຂ້ອຍຈຶ່ງໄປຮຽນຫນັງສືຢູ່ບ້ານອື່ນ, ຮຽນຈົບຫ້ອງ ປໍ 4 ພໍດີອາຍຸຂ້ອຍໄດ້ 13-14 ປີ ຂ້ອຍກໍອອກເຮັດການປະຕິວັດ.

ທຸກຄັ້ງທີ່ຂ້ອຍຈັບປາກກາຂຶ້ນມານັ່ງຂຽນຊີວະປະຫວັດ ຕົນເອງ ຄົງບໍ່ມີໃຜຮູ້ດອກວ່າຂ້ອຍຄິດແນວໃດ? ຊີວິດຂອງຂ້ອຍໃນໄລຍະເຍົາໄວນັບວ່າເປັນໄລຍະທີ່ມີຫລາຍລົດຊາດ, ມີທັງເຜັດ, ເຄັມ, ຂົມຂື່ນ ແລະ ມີຫລາຍສິ່ງຫລາຍຢ່າງທີ່ຂ້ອຍໄດ້ພົບພໍ້ ແລະ ໄດ້ປະເຊີນຫນ້າ, ຊຶ່ງມັນກໍ່ເປັນເລື່ອງທີ່ບໍ່ມີໃຜປາດຖະໜາ, ຂ້ອຍໄດ້ເປັນທະຫານນ້ອຍ, ເປັນຄົນຮັບໃຊ້, ເປັນທັງພະນັກງານວິຊາການ ແລະ ເປັນນັກຮຽນ, ຖ້າເລືອກໄດ້ຂ້ອຍຈະເລືອກເອົາຊີວິດເປັນນັກຮຽນເທົ່ານັ້ນ ມັນຈຶ່ງເໝາະສົມກັບໄວອາຍຸຂອງຂ້ອຍ.

ຊຶ່ງຈະເປັນໂອກາດໃຫ້ຂ້ອຍໄດ້ໄຂວ່ຄວ້າຫາຄວາມຮູ້ມາໃສ່ໂຕຫລາຍກວ່ານີ້, ສ່ວນເລື່ອງອື່ນໆແມ່ນຂ້ອຍຢາກຫລີກຫລີຍາກໂຍນເປັນພາລະໃຫ້ຜູ້ໃຫຍ່ທີ່ມີອາຍຸສູງກວ່າຮັບເອົາໄປ.

ແຕ່ກໍ່ຄືງເປັນໄປບໍ່ໄດ້, ເພາະຊາຕາຊີວິດຂອງຂ້ອຍໄດ້ກຳນົດມາຄືແນວນີ້: ນັ່ງຂຽນທວນຄືນໃນອະດີດ ບາງຄັ້ງຂ້ອຍກໍ່ຍິ້ມຫົວຄົນດຽວ, ບາງຄັ້ງຂ້ອຍກໍເຊັດນ້ຳຕາ ຫລືຄິດລະເມີເພີ້ຝັນໄປກໍມີ, ເພາະອະດີດທີ່ແສນຍາວໄກບົນເສັ້ນທາງເຂົ້າຮ່ວມການປະຕິວັດ, ມີທັງອຸປະສັກ, ຄວາມທຸລະກັນດານທີ່ໄດ້ຜ່ານຜ່າ, ມີທັງຄວາມຮັກຊາດ, ຮັກບ້ານເກີດເມືອງນອນ, ຮັກພໍ່ແມ່, ຮັກຜູ້ຄົນອ້ອມຂ້າງ ແລະ ຮັກໝູ່ຄູ່ເພື່ອນຝູງແຕ່ກໍຈຳຕ້ອງພັດພາກໄປແຕ່ລະຄົນ, ຄວາມທຸກໂສກ, ຄິດຮອດ, ທວນຫາເປັນສິ່ງທຳມະດາຂອງມະນຸດ, ໃນຂະນະດຽວກັນອຸດົມການ, ຄວາມສຸກສົມຫວັງໃນໜ້າທີ່ການງານ ແລະ ການຮ່ຳຮຽນເພື່ອຍົກລະດັບຕົນເອງກໍໄດ້ເປັນກຳລັງໃຈອັນໃຫຍ່ຫລວງເຮັດໃຫ້ຂ້ອຍເຕີບໃຫຍ່ຂຶ້ນ ຈົນມາເຖິງວັນນີ້. ມີຫລາຍຄຳຖາມເວົ້າຂຶ້ນມາ, ຂ້ອຍສົມຄວນຂຽນເລື່ອງຂອງຂ້ອຍເອງຫລືບໍ່?, ມັນບໍ່ເທົ່າກັບຊອກວຽກໃສ່ຕົນເອງລ້າໆບໍ? ຄິດໄປຄິດມາ, ຄິດຫລາຍຫລົບ, ຫລາຍຕ່າວຂ້ອຍຈຶ່ງຕັດສິນໃຈຂຽນ ເພື່ອບັນທຶກເລື່ອງລາວຕ່າງໆ. ທີ່ເກີດຂຶ້ນໃນໄລຍະເກືອບ 50 ປີທີ່ຊີວິດໄດ້ຕິດພັນກັບພາລະກິດ ແຫ່ງການຕໍ່ສູ້ກູ້ຊາດ, ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ...ມັນເປັນຊ່ວງໄລຍະທີ່ມີຄຸນຄ່າຫຍັງແດ່ ແລະ ຫລາຍພຽງໃດໃຫ້ແກ່ສັງຄົມ, ປະເທດຊາດ ແລະ ຄອບຄົວລູກໆຫລານໆ. ສ່ວນ

*ວ່າມັນຈະກາຍເປັນຄວາມພາກພູມໃຈ, ຕື້ນຕັນໃຈ ແລະ ເສຍໃຈສຳລັບພວກເຂົາເຫລົ່ານັ້ນ, ຂ້ອຍບໍ່ສາມາດຈະກຳນົດໃຫ້ພວກເຂົາໄດ້, ມັນແລ້ວແຕ່ສິ່ງແວດລ້ອມ, ຈິດສຳນຶກ ແລະ ອະນາຄົດຂ້າງຫນ້າຈະເປັນສິງກະທົບ ຫລື ພັກດັນແນວຄິດຈິດໃຈຂອງພວກເຂົາເຈົ້າ...*

## *ປາກກາເຂົ້າບໍານານບໍ່ເປັນ!*

### *ຄໍາເຫັນຂອງ ທ່ານ ວິເສດ ສະແຫວງສຶກສາ-ນັກປະພັນ*

*ຂ້າພະເຈົ້າ ອ່ານປຶ້ມ* " **ຮອຍຊີວິດ** " *ດ້ວຍໃຈຈົດຈໍ່ ແລະ ສໍາເລັດ ໄວປານສາຍຟ້າແລບ ທັງໆທີ່ນໍາໃຊ້ເຕັກນິກ* " **ອ່ານລະຫວ່າງແຖວ** " ( *Read between the lines* ) *ຄືອ່ານໄປນໍາຄິດທາງໍາໄປນໍາ, ມີບາງບ່ອນກໍ່ເອົາອາລົມເຈີດເຈີ້ຍໄປຕາມເຫດການ. ເຕັກນິກນີ້ເຮັດໄດ້ງ່າຍໆ ເພາະເຫດການທີ່ ເທດລະຄອນ ດວງສິນທິ ເອົາມາຄົວເປັນເນື້ອໃນຂອງປຶ້ມນັ້ນ ລ້ວນແຕ່ເກີດຂຶ້ນໃນຊີວິດໄວໜຸ່ມ ຂອງຂ້າພະເຈົ້າ. ບັນດາບຸກຄົນທີ່ຜູ້ຂຽນ ເອີ່ຍເຖິງໃນທ້ອງເລື່ອງສ່ວນຫຼາຍ ຂ້າພະເຈົ້າລື້ງ ແລະ ຮູ້ຈັກເປັນການສ່ວນຕົວ ດັ່ງນັ້ນ ຈຶ່ງເວົ້າໄດ້ວ່າ* " **ຮອຍຊີວິດ** " *ແມ່ນພາບສະທ້ອນໃຫ້ເຫັນເລື່ອງຈິງຄົນແທ້ທີ່ເກີດຂຶ້ນໃນຍາມໜຶ່ງ ຂອງການຕໍ່ສູ້ທີ່ເຕັມໄປດ້ວຍຄວາມທໍລະຫົດອົດທົນ ແລະ ການເສຍສະຫຼະ ເພື່ອວັນໃໝ່ໃສງາມຂອງປະເທດຊາດ ແລະ ປະຊາຊົນລາວຄືສູ່ມື້ນີ້.*

*ກໍ່ຕ້ອງຂໍຊົມເຊີຍ ແຕ່ແຖວທໍາອິດຈົນຮອດແຖວສຸດທ້າຍຂອງປຶ້ມ. ຍອມຮັບວ່າ ຜູ້ຂຽນມີເຕັກນິກສະຫຼັບສັບສາກເນື້ອໃນໄດ້ດີສາມາດເຮັດໃຫ້ອາລົມສົນ, ໂຄງເລື່ອງ ແລະ ສະພາບແວດລ້ອມກົມກືນເປັນໜຶ່ງດຽວ ໂດຍຜ່ານສັບພາສາທໍາມະດາ-ທໍາມະ*

ດາ ແຕ່ມີພະລັງໂນ້ມນ້າວຈ່ອງດຶງ ບໍ່ໃຫ້ຜູ້ອ່ານປົງປື້ມຈົນກວ່າຈະອ່ານສຸດ.

ແຕ່ລະສາກແຕ່ລະຕອນຂອງ " **ຮອຍຊີວິດ** " ນັ້ນບໍ່ມີບ່ອນຖິ້ມ, ແຕ່ກິນໃຈກວ່າໝູ່ (ສຳລັບຂ້າພະເຈົ້າ) ແມ່ນບັ້ນ " **ດຳລົງຊີວິດຢູ່ຖ້ຳໝາຫຼົງ** " ເຊິ່ງສ່ອງແສງໃຫ້ເຫັນເຖິງຈຸດພິເສດ ຂອງຄົນເຮົາໃນໄວຄະນອງ ແລະ ຄວາມອາດຫານຂອງໄວໜຸ່ມ, ບັ້ນ " **ຜູ້ຢູ່ໃນເຫດການ** " ທີ່ສະໜາມຮົບນ້ຳບາກມີໄຊ, ບັ້ນ " **ຈັກພິມດີດຮ້ອນ** " ແລະ " **ຕັດຜົມໃຫ້ລຸງ** ".

ປື້ມ " **ຮອຍຊີວິດ** " ຂອງ ເຫດລະຄອນ ດວງສົນທິ ເໝາະສຳລັບຜູ້ອ່ານທຸກເພດໄວ ພິເສດແມ່ນສຳລັບ " **ສົນໄຊແຫ່ງຍຸກສະໄໝ** " ເຊິ່ງໄດ້ແກ່ຊາວໜຸ່ມລາວນັ້ນເອງ.

ປື້ມນີ້ຂຽນຂຶ້ນໃນໄລຍະທີ່ອາຍຸລັດຖະການ ຂອງ ເຫດລະຄອນ ຍັງເຫຼືອອີກບໍ່ຫຼາຍ ແຕ່ຂ້າພະເຈົ້າເຊື່ອວ່າ ອາຍຸການປາຍປາກກາຂອງເພິ່ນຄົງຈະບໍ່ສິ້ນສຸດສ້ວຍຮ້ວຍໄປຕາມ, ເພາະປາກກາບຳນານບໍ່ເປັນ !

ສຳລັບຜູ້ທີ່ມີປື້ມຊຸດໜຶ່ງ ຫຼື ຫຼາຍຊຸດ ອອກສູ່ສັງຄົມນັ້ນ, ຄຽງຄູ່ກັບຄວາມພູມໃຈແລ້ວ ຍັງໄດ້ຮັບຮູ້ວ່າຕົນເອງກຳລັງກາຍເປັນລູກໜີ້ ທາງດ້ານຈິດໃຈ, ສ່ວນຜູ້ອ່ານ ແລະ ສັງຄົມນັ້ນເປັນເຈົ້າໜີ້ ໂດຍອັດຕະໂນມັດ. ດັ່ງນັ້ນ, ຖ້າເຮົາມິດງຽບບໍ່ສືບຕໍ່ຂຽນ, ສັງຄົມກໍ່ ຈະສົງໃສໄປຕ່າງໆນາໆ, ອາດຄິດວ່າເຮົາປົງປາກກາ, ອາດຄິດວ່າປາກກາເຮົາປູ້. ດີບໍ່ດີ ຜູ້ອ່ານບາງຄົນອາດເອົາເລື່ອງ " **ພະຍາດຜູ້ກຽວ** " ເຂົ້າມາພົວພັນກັບຄວາມມິດງຽບດັ່ງກ່າວ.

*ຂ້າພະເຈົ້າຄິດວ່າ ເທດລະຄອນ ດວງສິນທິ ຄົງຈະບໍ່ປ່ອຍໃຫ້ໃຜມາເຄາະປະຕູຖາມໜີ້ຖຸງເຮືອນເດັດຂາດ !*

ວຽງຈັນ, ວັນທີ 31 ຕຸລາ 2008

ວິເສດ ສະແຫວງສຶກສາ



24 / VII

ห้ามจำหน่าย

## ສະເກັດປະຫວັດສາດ

# ຄຳເຫັນຂອງ ທ່ານ ຈັນທີ ເດືອນສະຫວັນ

## ປະທານສາມະຄົມນັກປະພັນລາວ

ເທດລະຄອນ ດວງສິນທີ ເຂົ້າຮ່ວມການປະຕິວັດຊຸມປີຕໍ່ຕ້ານຈັກກະພັດອາເມລິກາ, ໄດ້ກຳເນີດ ແລະ ເຕີບໃຫຍ່ຂຶ້ນທ່າມກາງເສິກກາງເມືອງໃນລາວ ແລະ ກໍ່ເປັນເວລາທີ່ການປະຕິວັດລາວ ຕົກຢູ່ໃນສະພາບຫົວລ້ຽວຫົວຕໍ່ ໂດຍສະເພາະຢ່າງຍິ່ງບັນດາຜູ້ນຳ ຂອງການປະຕິວັດຖືກພວກຝ່າຍຂວາຈັບຂັງຄຸກ.

ຍ້ອນມີຄວາມກະຕືລືລົ້ນຂອງໄວໜຸ່ມ, ເດັກສະຫຼອກກອກທີ່ໜ້າຮັກເທດລະຄອນ ກໍ່ໄດ້ອຳລາຈາກຄອບຄົວເຮືອນຊານ ຈາກພໍ່ແມ່ຍາດຕິພີ່ນ້ອງໄປຢູ່ໃນຖັນແຖວກູ້ຊາດ ກູ້ເອກະລາດ ແລະ ອິດສະຫຼະພາບ ແຕ່ອາຍຸຍັງອ່ອນນ້ອຍ. ແຕ່ໂດຍຜ່ານການຫຼໍ່ຫຼອມຊຸບລ້ຽງຈາກແປວໄຟ ຂອງການປະຕິວັດ ໃນທີ່ສຸດ ເທດລະຄອນ ກໍ່ເດີນທາງແຫ່ງອຸດົມການຢ່າງສຸດກົກສຸດປາຍ ແລະ ກາຍ ເປັນພະນັກງານຫຼັກແຫຼງ ຄົນໜຶ່ງຂອງພັກ-ລັດ.

ຜ່ານຈາກພຶດຕິກຳຕົວຈິງບົນແປວໄຟ ຂອງການປະຕິວັດ, ເທດລະຄອນ ໄດ້ສະສົມທຶນຮອນ ແລະ ຊີວິດການຕໍ່ສູ້ມາ

ຢ່າງຊຸກຊົນ, ມາມື້ນີ້ ເທດລະຄອນ ຈຶ່ງໄດ້ເອົາພຶດຕິກຳເຫຼົ່ານັ້ນ ມາທົບທວນ ແລະ ຂຽນເປັນບົດທວນຄືນຫຼັງທີ່ໜ້າອ່ານ ແລະ ຈັບໃຈ.

ອ່ານປຶ້ມ **"ຮອຍຊີວິດ"** ຂອງເທດລະຄອນ, ເຫັນວ່າ ມີຄຸນຄ່າໃນແງ່ໜຶ່ງຂອງປະຫວັດສາດ ທີ່ຜູ້ກ່ຽວໄດ້ເຫັນ ໄດ້ເຮັດ ຕົວຈິງ. ໂດຍສະເພາະຢ່າງຍິ່ງ ເຫັນໄດ້ສະພາບຄວາມທຸກຍາກ ແສນເຂັນ ຂອງໄລຍະຕໍ່ສູ້ຂອງບັນດານັກປະຕິວັດ ກໍ່ຄືປະຊາຊົນ ທີ່ຜ່ານສົງຄາມພິເສດ ຂອງສະຫະລັດອາເມລິກາ ກໍ່ຄືພວກຫຸ່ນ ຂາຍຊາດລາວ. ເຫັນໄດ້ຄວາມສະຫຼາດ ສ່ອງໃສຂອງທ່ານຜູ້ນຳ, ເຫັນໄດ້ຄວາມຮັກຫອມຖະໜອມກັນ ລະຫວ່າງຜູ້ນຳ ກັບຜູ້ຖືກ ນຳ ເໝືອນຍາດພີ່ນ້ອງຮ່ວມອຸທອນ ດັ່ງຕົວຢ່າງລຸງ ສີສົມພອນ ລໍວັນໄຊ ຊຶ່ງປາຍປາກກາຂອງ ເທດລະຄອນ ໄດ້ພັນລະນາ ມັນເປັນຮູບພາບທີ່ໜ້າຈັບໃຈທີ່ສຸດ ແລະ ຄົນອ່ານແລ້ວ ຈະຮູ້ສຶກ ເຄົາລົບຮັກຜູ້ນຳຂອງການປະຕິວັດ ໃນຍາມນັ້ນ.

ເຖິງຈະເປັນປຶ້ມເຫຼັ້ມນ້ອຍເຫຼັ້ມໜຶ່ງ ເປັນສະເກັດປະ ຫວັດສາດໜຶ່ງ ແຕ່ອ່ານແລ້ວ ກໍ່ສາມາດຮູ້ໄດ້ສະພາບ ແລະ ຮູບພາບລວມ ຂອງຍຸກສະໄໝຈັກກະພັດອາເມລິກາ ເຂົ້າແຊກ ແຊງຮຸກຮານລາວ ໃນນັ້ນ ມີບັ້ນຮົບນ້ຳບາກເປັນຕົວເຕັງ. ສິ່ງສຳ ຄັນອີກອັນໜຶ່ງແມ່ນ ໃນປຶ້ມຫົວນີ້ ໄດ້ເໜັ້ນໜັກເຖິງສາຍສຳພັນ ມິດຕະພາບ ລາວ-ຫວຽດນາມ ຊຶ່ງເວລາໃດ ຫວຽດນາມກໍ່ເປັນ ເພື່ອນຜູ້ໄວ້ເນື້ອເຊື່ອໃຈ ແລະ ພິເສດຂອງລາວ, ນອກຈາກການ ຊ່ວຍເຫຼືອດ້ານວັດຖຸປັດໃຈແລ້ວ, ຍັງສິ່ງກຳລັງພົນອາສາສະໝັກ

*ມາຊ່ວຍການປະຕິວັດລາວ, ຊ່ວຍສ້າງພະນັກງານລາວຈາກ ກ.ຂ.ຄ.ງ ກາຍມາເປັນພະນັກງານຂັ້ນນຳ ຂອງຊາດລາວຈົນເທົ່າທຸກວັນນີ້.*

*ເຖິງວ່າ ເທດລະຄອນ ບໍ່ແມ່ນນັກປະພັນ ນັກກະວີ ຜູ້ໂດ່ງດັງ ແຕ່ຜ່ານຈາກປຶ້ມ* **"ຮອຍຊີວິດ"** *ເຫຼັ້ມນີ້ກໍ່ເຫັນໄດ້ວ່າ ສະຫາຍ ເທດລະຄອນ ມີພອນສະຫວັນໃນວັນນະຄະດີປະຕິວັດ ແລະ ຫວັງວ່າ ສະຫາຍຈະສືບຕໍ່ຂຽນໄປເລື້ອຍໆ.*

ວຽງຈັນ, ວັນທີ 12 ກັນຍາ 2008

**ຈັນທີ ເດືອນສະຫວັນ**



# ເມັດຊາຍໃນຫາດ

## ຄຳເຫັນຂອງ ທ່ານ ມາລາຈອນ ລິດອຸທຸມ
## ບັນນາທິການໜັງສືພິມປະຊາຊົນ

ຂ້າພະເຈົ້າຮູ້ສຶກປະຫລາດໃຈ ທີ່ໄດ້ຮັບໂທລະສັບທາງໄກ ຈາກທ່ານ ເທດລະຄອນ ດວງສິນທິ ສະເໜີໃຫ້ກວດກາ ແລະ ຮຽບຮຽງ ປຶ້ມບັນທຶກ " **ຮອຍຊີວິດ** " ຂອງເພິ່ນທີ່ຈະສົ່ງມາໃຫ້ໃນອີກ 2-3 ວັນຂ້າງໜ້າ, ທີ່ປະຫລາດໃຈກໍຄືວ່າ: ເພິ່ນມີຄວາມເຊື່ອໝັ້ນຂ້ອຍສໍ່າໃດ? ຈຶ່ງກ້າມອບສິດທີ່ມີລັກສະນະຕັດສິນສຸດທ້າຍໃຫ້ກັບກອງບັດຊຽນທີ່ອອກຈາກປະສົບການ, ມັນສະໝອງຂອງເພິ່ນຊຶ່ງກໍແມ່ນຜະລິດຕະພັນທີ່ມີສ່ວນໄດ້-ເສຍ ຕໍ່ບົດບາດຊື່ສຽງຂອງເພິ່ນ ເມື່ອປຶ້ມເຫລັ້ມນີ້ຫາກຖືກພິມ ແລະຈໍາໜ່າຍອອກສູ່ສາຍຕາຂອງມະຫາຊົນ.

ທຳອິດຂ້າພະເຈົ້າ ກໍ່ມີຄວາມຫລັ່ງເລທີ່ຈະຕອບຮັບຍ້ອນບໍ່ຄ່ອຍມີເວລາແດ່ ແລະ ຢ້ານເຮັດບໍ່ໄດ້ກໍ່ທໍ່ກັນ, ແຕ່ເມື່ອຄິດໄປຄິດມາ ແລະ ໄດ້ຍິນສຽງໜັກແໜ້ນຈາກໂທລະສັບດ້ວຍສໍານຽງຜູ້ໄທຄືກັນ, ຢູ່ເມືອງດຽວກັນ ແລະ ລື້ງເຄີຍກັນມາແຕ່ດົນນານເພິ່ນຮ້ອງ ຫາເຫື່ອດຽວກໍຈະປະຕິເສດໄດ້ແນວໃດ.

ເມື່ອໄດ້ຮັບຕົ້ນສະບັບ, ຂ້າພະເຈົ້າກໍ່ມີຄວາມພະຍາຍາມອ່ານຫລາຍຫລົບ, ຫລາຍຕ່າວ ເພື່ອທຳຄວາມເຂົ້າໃຈເນື້ອໃນແຕ່ລະເລື່ອງ ແລະ ນຳຕົນເອງທວນຄືນເຖິງເລື່ອງລາວຕ່າງໆໃນອະດີດທີ່ເຄີຍດຳລົງຊີວິດຢູ່ເຂດປົດປ່ອຍ (ເມືອງວຽງໄຊໃນປະຈຸບັນ) ໃນໄລຍະດຽວກັນ ຈຶ່ງຮູ້ສຶກໂລ່ງໃຈເມື່ອຮູ້ສຶກວ່າ: ທ່ານ ເທດລະຄອນ ດວງສິນທິ ເປັນຜູ້ມີຄວາມຊົງຈຳດີທີ່ຫາຍາກ ພ້ອມທັງມີພອນສະຫວັນໃນການຂີດຂຽນນຳອີກ. ເພິ່ນໄດ້ຈັບເອົາເລື່ອງເດັ່ນໃນຊີວິດ, ປະສົບການທີ່ເກີດຂຶ້ນກັບຕົນເອງ ແລະ ສິ່ງພົບພໍ້ມາຂຽນຢ່າງມີຈຸດປະສົງ, ກວມເອົາຫລາຍເລື່ອງ, ຫລາຍບັນຫາ, ຫລາຍລົດຊາດ ແລະ ຫລາຍພາສາຄຳເວົ້າທ້ອງຖິ່ນ, ຊົນເຜົ່າທີ່ສ່ອງແສງໃຫ້ເຫັນສະພາບແວດລ້ອມໃນຍາມນັ້ນ ຊຶ່ງລ້ວນແຕ່ເປັນເລື່ອງທີ່ໜ້າຮູ້ ແລະ ເປັນປະໂຫຍດ ໃນການສຶກສາອົບຮົມຊາວໜຸ່ມເຍົາວະຊົນທີ່ເກີດໃໝ່ໃຫຍ່ລຸນ, ຢ່າງນ້ອຍກໍ່ເປັນເງົາສະທ້ອນໃຫ້ພວກເຂົາ ໄດ້ຮູ້ວ່າ: ເບື້ອງຫລັງໄຊຊະນະຂອງການປະຕິວັດ ແລະ ໝາກຜົນທີ່ພວກເຂົາເຈົ້າໄດ້ເຊີຍຊົມໃນສູ່ມື້ນີ້ນັ້ນ, ມັນບໍ່ໄດ້ມາຢ່າງງ່າຍດາຍ, ມັນແມ່ນໝາກຜົນທີ່ແລກມາດ້ວຍເລືອດເນື້ອ-ຊີວິດ ແລະ ຄວາມທຸກຍາກກາກກຳຂອງພະນັກງານ, ທະຫານ ແລະ ປະຊາຊົນລາວບັນດາເຜົ່າບໍ່ຈັກວ່າເທົ່າໃດ.

ຂ້າພະເຈົ້າຮູ້ສຶກເປັນກຽດທີ່ມີສ່ວນໄດ້ກວດແກ້ ແລະ ຮຽບຮຽງປື້ມບັນທຶກທິວນີ້, ເຖິງວ່າຍັງມີຂໍ້ຈຳກັດ, ບໍ່ທັນສົມບູນແບບ ແລະ ກໍບໍ່ອາດຈະຖືກໃຈທ່ານຜູ້ອ່ານໝົດທຸກຄົນໄດ້, ແຕ່ກໍໄດ້ເຮັດດີທີ່ສຸດເທົ່າທີ່ຂໍ້ມູນອຳນວຍໃຫ້, ເພື່ອຊ່ວຍໃຫ້ທ່ານຜູ້

ອ່ານສຳນຶກໄດ້ວ່າ: ໃນໄລຍະເຮັດການປະຕິວັດຊາດ ປະຊາທິປະໄຕ ພາຍໃຕ້ທ່າລະເບີດລູກບົມ ຂອງຈັກກະພັດນຳເບີຫນຶ່ງໃນໂລກຖອກລົງມາໃສ່ເຂດປົດປ່ອຍ ຢ່າງເນື່ອງນິດລຽນຕິດນັບເປັນຫລາຍລ້ານໂຕນ ຈິນເບິ່ງຄືຈັ່ງວ່າ ບໍ່ມີສິ່ງທີ່ມີຊີວິດຍັງເຫລືອຫລໍນັ້ນ ພະນັກງານ, ທະຫານ ແລະ ປະຊາຊົນເຮົາບັນດາເຜົ່ານັບເປັນພັນເປັນໝື່ນຄົນ ຢູ່ເຂດປົດປ່ອຍດຳລົງຊີວິດ ຢູ່ຄືແນວໃດ? ກິນຫຍັງ? ໄປມາ ແລະ ເຄື່ອນໄຫວຕໍ່ສູ້ຄືແນວໃດ? ບັນດາທ່ານຜູ້ນຳການປະຕິວັດເດ? ເປັນຄົນຄືແນວໃດ? ນຳພາແນວໃດ? ຈຶ່ງນຳພາການປະຕິວັດ ຈາກໄຊຊະນະນີ້ໄປສູ່ໄຊຊະນະໃໝ່ຍິ່ງໃຫຍ່ກວ່າເກົ່າ ແລະ ກ້າວໄປສູ່ໄຊຊະນະຢ່າງສົມບູນໃນຂອບເຂດທົ່ວປະເທດ.

ແນ່ນອນລະ! ອະດີດຂອງຄົນຜູ້ຫນຶ່ງ, ປະສົບການຂອງຄົນຜູ້ຫນຶ່ງ ແລະ ປຶ້ມຫົວຫນຶ່ງບໍ່ອາດຈະພັນລະນາໄດ້ໝົດ ວິລະກຳອັນລ້ຳເລີດ, ໃຫຍ່ຫລວງ, ຫລວງຫລາຍເໝືອນຊາຍໃນຫາດທີ່ກອງທັບ ແລະ ປະຊາຊົນເຮົາໄດ້ປະເຊີນ ແລະ ສ້າງຂຶ້ນມາໄດ້

*ໃນໄລຍະກວ່າ 30 ປີ ແຫ່ງການຕໍ່ສູ້ປົດປ່ອຍຊາດ, ແຕ່ມັນກໍມີຄຸນລັກສະນະຄ້າຍໆກັນກັບເມັດຊາຍ ເມື່ອກໍາຂຶ້ນມາ ວິເຄາະກໍຈະຮັບຮູ້ໄດ້ເລື່ອງລາວຕ່າງໆ ທີ່ບໍ່ແມ່ນໃຜກໍເຄີຍຮູ້.*

ວຽງຈັນ, ວັນທີ 15 ສິງຫາ 2008



*ມາລາຈອນ ລິດອຸທຸມ*



# ພັດພາກຈາກບ້ານເກີດ

ເນື່ອງຈາກບ້ານເກີດເມືອງນອນຂອງຂ້ອຍ ເປັນເຂດສອກຫລີກ, ຫ່າງໄກຄວາມຈະເລີນ, ທາງລົດກໍ່ໄປບໍ່ຮອດ, ໄຟຟ້າຍິ່ງເອື້ອມບໍ່ເຖິງ, ກະບອງໄຕ້ເຍືອງຍາມຄ່ຳຄືນເປັນສິ່ງຈຳເປັນທີ່ທຸກຄອບຄົວຕ້ອງມີໄວ້, ເຂດສອກຫລີກທີ່ວ່ານີ້ ແຕ່ກີ້ແມ່ນຂຶ້ນກັບ ເມືອງເຊໂປນ ຕໍ່ມາແມ່ນຂຶ້ນກັບເມືອງພີນ, ມາໃນປະຈຸບັນ ເພິ່ນຈັດຕັ້ງເປັນເມືອງໜຶ່ງອີກ ເອີ້ນວ່າເມືອງວິລະບູລີ ຂຶ້ນກັບແຂວງສະຫວັນນະເຂດ ໂດຍກວມເອົາເຂດອ່າງຄຳ ແລະເຂດເມືອງວັງເຂົ້າກັນ ເຂດນີ້ເປັນເຂດອຸດົມສົມບູນ ເຕັມໄປດ້ວຍຊັບໃນດິນສິນໃນນ້ຳ. ມີບໍ່ຄຳ, ບໍ່ທອງ ແລະ ບໍ່ອື່ນໆ, ດຽວນີ້ພວມຂຸດຄົ້ນນຳມາໃຊ້. ສ່ວນບ້ານເກີດຂອງຂ້ອຍແທ້ໆແມ່ນບ້ານນາສາເລາະ, ເປັນບ້ານເກົ່າແກ່ແຕ່ຫາກບໍ່ໃຫຍ່, ມີປະມານ 80 ຫລັງຄາເຮືອນ, ທາງດ້ານຕາເວັນຕົກ ແມ່ນອີງຫລັງໃສ່ຕີນພູຊ້າງແຮ່, ແຕ່ຄາວຂ້ອຍຍັງນ້ອຍ, ທົ່ວບໍລິເວນນີ້ ເຕັມໄປດ້ວຍພູຜາປ່າດົງຕຶບໜາ.

ນັບຕັ້ງແຕ່ມີຂະບວນການປະຕິວັດເຊື່ອມເຂົ້າມາເຂດນີ້ ກໍ່ກາຍເປັນເຂດພື້ນຖານຂອງການປະຕິວັດ ຢ່າງໜາແໜ້ນ, ອ້າຍນ້ອງອິດສະລະກໍ່ຫລາຍ ແລະ ເຄື່ອນໄຫວໄປໆມາໆກໍ່ສະດວກສະບາຍ ດັ່ງນັ້ນຝ່າຍລັດຖະບານວຽງຈັນຈຶ່ງບໍ່ສົນໃຈ ແລະ ບໍ່ເອົາໃຈໃສ່ເທົ່າທີ່ຄວນ, ໂຮງຮຽນກໍ່ມີແຕ່ໂຮງຮຽນມູນຄືມີຫ້ອງປໍ 1 ຫາຫ້ອງ ປໍ 3 ເທົ່ານັ້ນ, ເດັກນ້ອຍນັກຮຽນສ່ວນຫລາຍຮຽນຈົບ ປໍ 3 ແລ້ວກໍ່ອອກເຮັດໄຮ່, ເຮັດນາ, ສະພາບດັ່ງກ່າວນີ້ເປັນມາຫລາຍເຊັ່ນຄືນແລ້ວ.

ຍ້ອນເລືອກບ່ອນເກີດບໍ່ໄດ້ຂ້ອຍຈຶ່ງເປັນຄືດັ່ງວ່າ. ເຖິງຢ່າງໃດກໍ່ຍັງຖືວ່າຂ້ອຍເປັນຜູ້ໂຊກດີແນ່ໜ້ອຍໜຶ່ງ ຖ້າທຽບໃສ່ຫລາຍຄົນໃນບ້ານຂ້ອຍກຳເນີດໃນຄອບຄົວທຸກຍາກອີ່ຫລີ ແຕ່ອ່າວແຄນແດ່ ຍ້ອນພໍ່ແມ່ເປັນຜູ້ເບິ່ງກ້ວາງ, ມອງໄກຕໍ່ອະນາຄົດຂອງລູກໆໂດຍສະເພາະຕໍ່ຂ້ອຍເປັນລູກຊາຍຫລ້າ ແມ່ນໄດ້ຮັບຄວາມເອົາໃຈໃສ່ລື່ນຜູ້ອື່ນ, ພາຍຫລັງຈົບ ປ3 ຢູ່ບ້ານແລ້ວ, ເພື່ອບໍ່ໃຫ້ການຮຽນຖືກຂາດບັ້ນຂາດຕອນ ພໍ່ແມ່ຕັດສິນໃຈສົ່ງຂ້ອຍໄປຮຽນ ໜັງສືຢູ່ບ່ອນທີ່ມີຫ້ອງຮຽນສູງກວ່າ ແຕ່ກໍ່ບໍ່ແມ່ນຢູ່ໃນເມືອງທີ່ຈະເລີນຫຍັງດອກ ເພາະວ່າຖ້າຮຽນຢູ່ໃນເມືອງແທ້ພໍ່ແມ່ກໍ່ຄືຊິບໍ່ມີປັນຍາທີ່ຈະຫາເງິນເພື່ອຍື່ນສົ່ງ, ທ້າຍລະດູຝົນປີ 1959 ຫລັງຈາກດຳນາແລ້ວຊຶ່ງກໍ່ພໍດີກຽມເຂົ້າສົກຮຽນໃໝ່ສົກປີ 59-60 ພໍ່ແມ່ໄດ້ຕັດສິນໃຈວ່າ: ແນວໃດກໍ່ຕ້ອງຊອກບ່ອນຮຽນໃຫ້ລູກ, ເພາະຄັນຊິປະໃຫ້ລູກເຊົາຮຽນກໍ່ຈະເສຍອະນາຄົດຂອງລູກ, ເປັນຈັ່ງບຸນຍາມນັ້ນມີຄົນໄທບ້ານໃກ້ຄຽງທີ່ກັບຈາກການໄປຮຽນໜັງສືມາຢາມບ້ານ, ເພິ່ນຜູ້ນີ້ກໍ່ບໍ່ແມ່ນຜູ້ອື່ນຜູ້ໄກຫຍັງດອກແມ່ນລູກພໍ່ສ່ຽວນັ້ນເອງ, ໄດ້ໂອກາດກໍ່ເລີຍຂໍຝາກຕິດຫ້ອຍໄປນຳເພິ່ນ ແລະເພິ່ນກໍ່ຍອມຮັບເອົາແບບບໍ່ຂັດບໍ່ຂືນຫຍັງ, ທັງໆທີ່ກະໂຕເພິ່ນເອງກໍ່ຍັງອາໄສຢູ່ເຮືອນນຳຜູ້ອື່ນ, ຂ້ອຍເອງກໍ່ຕັດສິນໃຈໄປນຳເພິ່ນ ເພື່ອຈະໄດ້ສືບຕໍ່ເຂົ້າຫ້ອງ ປ4 ຕາມຈຸດປະສົງ. ບ້ານສີໄຄເປັນບ້ານທີ່ອ່າວໃຫຍ່ແດ່, ເຊິ່ງຕັ້ງຢູ່ລະຫວ່າງກາງ ຂອງໄລຍະທາງແຕ່ສະຫວັນນະເຂດ ຫາທ່າແຂກ, ບ້ານນີ້ມີຫ້ອງຮຽນແຕ່ ປໍ1 ເຖິງ ປໍ 6 , ຄູສອນກໍ່ມີຄົບ ການໄປຮຽນຢູ່ບ້ານສີໄຄເທື່ອນີ້ກໍ່ມີຫລາຍບັນຫາໜັກໃຈ, ອັນສຳຄັນບໍ່ຮູ້ວ່າໄປພັກເຊົາຢູ່ນຳໃຜ? ຖ້າໂຮມກັນອາໄສຢູ່ເຮືອນດຽວທັງສີ່ຄົນ ກໍ່ຈຽມໃຈເຈົ້າຂອງເຮືອນ, ເຖິງວ່າເພິ່ນຈະເປັນຄົນໃຈກ້ວາງກໍ່ຕາມ, ເຮືອນເພິ່ນກໍ່ແຄບໆ, ບໍ່ທັນເວົ້າ

ຮອດເຂົ້ານ້ຳຂອງກິນຈະເອົາຢູ່ໃສ? ຖ້າຈະໄປຂໍເປັນສັງກະລີວັດ, ວັດໃດກໍ່ເຕັມໝົດແລ້ວ, ຕົວຈິງເວລາໄປຮອດທຳອິດບໍ່ໃຫ້ນ້ຳຕາກໍ່ໄຫລອອກ; ຄິດຢາກກັບບ້ານແຕ່ບໍ່ຮູ້ທາງ, ເປັນອັນວ່າຈົນປັນຍາທີ່ສຸດໃນຍາມນັ້ນ, ມີແຕ່ເອົາຄວາມອົດທົນເທົ່ານັ້ນເປັນຫລັກຄິດວ່າ ຍາມນັ້ນຕົນເອງຊິໄປບໍ່ລອດແທ້ໆ, ເຂົ້າໂຮງຮຽນໄດ້ສອງອາທິດພວມຮູ້ສຶກມ່ວນຕາມພາສາເດັກນ້ອຍ, ລີ້ງແກ່ນໝູ່ຄູ່ນັກຮຽນນຳກັນຫລາຍໜ້າຫລາຍຕາຂຶ້ນ, ພ້ອມກັນນັ້ນໂຊກດີກໍ່ມາເຖິງ, ຄ່ຳມື້ໜຶ່ງ ຫລັງຈາກກິນເຂົ້າແລງແລ້ວ ເຫັນລຸງຜູ້ໜຶ່ງພ້ອມດ້ວຍລູກສາວເພິ່ນ 2-3 ຄົນຍ່າງເປີດໜ້າມາຫາເຮືອນປ້າມາຍບ່ອນພວກເຮົາເຊົາຢູ່,ບໍ່ຮູ້ວ່າເພິ່ນລົມກັນແນວໃດກ່ອນແລ້ວ ພໍມາເຫັນຂ້ອຍເອື້ອຍທົງສາ ແລະ ເອື້ອຍນິນທາກໍ່ແລ່ນມາຫາ ແລະ ເວົ້ານຳຂ້ອຍວ່າ: ເມືອຢູ່ເຮືອນພວກເອື້ອຍເດີ! ຊຸມພວກໝູ່ ແລະ ອ້າຍສ່ວງກໍ່ພາກັນແຫ່ໄປສົ່ງ, ເປັນອັນວ່າແຕ່ເວລານັ້ນມາຂ້ອຍໄດ້ໄປຢູ່ໃຕ້ສາຍຄາເຮືອນຂອງແມ່ຜູ້ທີ່ເຕັມໄປດ້ວຍຄວາມເມດຕາ ແລະ ໃຫ້ຄວາມອົບອຸ່ນ, ແຕ່ນັ້ນມາຂ້ອຍກໍ່ບໍ່ອຸກອັ່ງປານໃດ ຍາມແລງແຕ່ລະມື້ພາຍຫລັງເລີກໂຮງຮຽນມາແລ້ວ ພວກເອື້ອຍກໍ່ພາໄປຕັກນ້ຳສ້າງຫາບມາ 2-3 ຫາບເຕັມອຸ, ເຕັມແອ່ງ, ຖ້ຽວສຸດທ້າຍພວກເອື້ອຍກໍ່ຫາບມາເອງ ສ່ວນຂ້ອຍເລີຍໄປຈູງເອົາງົວ ມາເຂົ້າແຫລ່ງພ້ອມ, ຢູ່ເຮືອນມີງົວກວຽນຄູ່ໜຶ່ງ, ໂຕໜຶ່ງເປັນສີດຳ, ດ່າງ, ຂາວ ແລະ ອີກໂຕໜຶ່ງເປັນສີດອກຈຳປາ, ດັ່ງນັ້ນ, ເພິ່ນຈຶ່ງພາຂ້ອຍເອີ້ນງົວກວຽນຄູ່ນີ້ວ່າ: "ບັກຈຳປາ-ດ່າງ".

ຕອນຊຸ່ມມືດພາຍຫລັງກິນເຂົ້າແລ້ວ, ຂ້ອຍກໍ່ເລີ່ມຕົ້ນຮຽນໜັງສື ຊຶ່ງມີທັງແກ້ບົດຝຶກຫັດ, ເລົ່າບົດຮຽນ, ບົດທ່ອງຂຶ້ນໃຈ, ແກ້ບົດເລກ, ບາງມື້ໄດ້ແອບຊຽນທວາຍ ໂດຍໃຫ້ພວກເອື້ອຍກວດຊ່ວຍ, ມື້ໃດກໍ່ຮຽນຈົນເດິກ

ດົນ ຈຶ່ງໄດ້ເຂົ້ານອນ, ສ່ວນພວກເອື້ອຍໆກໍ່ຖ້າເຂົ້ານອນພ້ອມກັນທຸກໆມື້, ຊຶ່ງນານວັນເທົ່າໃດຂ້ອຍຍິ່ງມີຄວາມຮູ້ສຶກວ່າ: ພວກເອື້ອຍເຂົາເຈົ້າກໍ່ຮັກແພງຂ້ອຍຫລາຍ, ບາງເທື່ອກໍ່ຍາດກັນຮັກຊ້ຳອີກ, ເວລາມີເຄື່ອງກິນແຊບຂ້ອຍກໍ່ໄດ້ກິນຫລາຍກວ່າພວກເອື້ອຍ, ດ້ານໜຶ່ງຢູ່ເຮືອນຫລັງນີ້ສ່ວນໃຫຍ່ຊ້ຳພັດແມ່ນຜູ້ຍິງ, ຮອດຕອນເຊົ້າທຸກໆມື້ຂ້ອຍຕ້ອງໄດ້ລຸກພ້ອມພວກເອື້ອຍເພື່ອຊ່ວຍຕຳເຂົ້າຄົກນອງ, ຂ້ອຍຮູ້ແຕ່ຢຽບຫາງຄົກຊ່ວຍເພິ່ນຫລືບໍ່ກໍ່ເປັນຜູ້ຈັບໄມ້ແສ້ໄລ່ໄກ່ຢູ່ທິວຄົກນອງພູ້ນ, ສ່ວນພວກເອື້ອຍແມ່ນເປັນຜູ້ຟັດເຂົ້າ ແລະ ເຂິງເຂົ້າ ເພາະຂ້ອຍເອງບໍ່ຮູ້ເຮັດ ແລະ ພວກເອື້ອຍເຂົາເຈົ້າກໍ່ບໍ່ແອບໃຫ້ເຮັດ ມື້ໃດບົດທ່ອງຂຶ້ນໃຈເລົ່າອ່າວຍາກແດ່, ຂ້ອຍກໍ່ສວຍໂອກາດເອົາເວລາຊ່ວຍພວກເອື້ອຍຕຳເຂົ້າທັງຢຽບຫາງຄົກນອງ, ທັງເລົ່າບົດຮຽນໄປພ້ອມ, ດ້ວຍເຫດນັ້ນ ຄະແນນຮຽນປະຈຳເດືອນຂອງຂ້ອຍຈຶ່ງແລ່ນຈາກທີ 9-10 ຂຶ້ນມາເປັນ 2-3 ຫລືຕ່ຳສຸດກໍ່ເປັນ 4 ນີ້ລະ, ພວກເອື້ອຍອ້າຍຄູ ແລະ ໝູ່ຄູ່ນັກຮຽນນຳກັນກໍ່ເລີ່ມຮູ້ຈັກຮັກແພງຂ້ອຍຫລາຍຂຶ້ນເລື້ອຍໆ, ເມື່ອຮອດທ້າຍປີເສັງຂຶ້ນຫ້ອງທີ 5 ຂ້ອຍກໍ່ເສັງໄດ້ທີ 2 ຂອງຫ້ອງ ຊຶ່ງຂ້ອຍດີໃຈຫລາຍຫາອັນປຽບບໍ່ໄດ້ເພາະເວລາພັກກັບມາຢາມບ້ານຈະໄດ້ນຳເອົາຜົນສຳເລັດດັ່ງກ່າວມາເລົ່າສູ່ພໍ່ແມ່ແລະໝູ່ຄູ່ພີ່ນ້ອງຟັງ.

ເວລາໂຮງຮຽນພັກປະຈຳປີ ກ່ອນຈະເດີນທາງກັບບ້ານ ເພື່ອຕົກກ້າດຳນາຊ່ວຍພໍ່ແມ່, ເວລານັ້ນສະພາບການບ້ານເມືອງເລີ່ມຄັບຂັນ ແລະທະວີຄວາມຫຍຸ້ງຍາກຫລາຍຂຶ້ນຊັກໃຊ້, ການຕໍ່ສູ້ລະຫວ່າງສອງຝ່າຍເລີ່ມທະວີຄວາມຮຸນແຮງຂຶ້ນເລື້ອຍໆ, ການລັດຖະປະຫານ 9/8/1960 ໄດ້ສ້າງທ່າແຮງ ແລະ ກາລະໂອກາດໃຫ້ແກ່ກຳລັງຮັກຊາດ ເປີດກ້ວາງເຂດປົດປ່ອຍແຕ່ເໜືອຮອດໃຕ້, ດິນຕໍ່ແຜ່ນແຕ່ຖືກຕັດອອກເປັນສອງເຂດ:

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນໍາມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ